ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

老挝人民民主共和国

和平　独立　民主　统一　繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 209/ບລຈ

编号:209/老-中证券

ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2026

首都万象市，日期：2026 年 6 月 24 日

ໜັງສືແຈ້ງເຊີນ

邀请函

ຮຽນ: ທ່ານຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ທີ່ນັບຖື

致：尊敬的老-中证券公众公司各位股东

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026.

主题：邀请参加老-中证券 2026 年第一次临时股东会

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026, ສະບັບເລກທີ 194/ບລຈ, ລົງວັນທີ 12 ມິຖຸນາ 2026.
- 根据 2026 年 6 月 12 日老签署的《2026 年第一次临时董事会会议决议》（[老中证券]第 194 号）。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຂໍຖືເປັນກຽດຢ່າງສູງຮຽນເຊີນທ່ານຜູ້ຖືຮຸ້ນ ບລຈ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ໃນວັນພະຫັດ ທີ 09 ກໍລະກົດ 2026 ເວລາ 9:00 ໂມງ ເປັນຕົ້ນໄປ (ເລີ່ມລົງທະບຽນເວລາ 8:30 ໂມງ) ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄາຕະຫຼາດຫຼັກຊັບລາວ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

老-中证券公众公司（以下简称“老-中证券”）诚邀各位股东出席老-中证券 2026 年第一次临时股东会。会议将于 2026 年 7 月 9 日（星期四）北京时间 10:00 举行，签到时间为北京时间 09:30，地点位于老挝首都万象市赛色塔县彭覃村老挝证券交易所大楼 8 楼大会议室，届时将审议各项议案。

ນອກຈາກນີ້ ບລຈ ຍັງໄດ້ແຈ້ງວາລະກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026, ເອກະສານຄັດຕິດເພື່ອໃຊ້ໃນການພິຈາລະນາ ແລະ ລົງຄະແນນສຽງທັງໝົດນັ້ນ ໄດ້ຖືກເຜີຍແຜ່ໂດຍ ບລຈ ຜ່ານ ເວັບໄຊຂອງ ບລຈ (www.lcs.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ

(www.lsx.com.la) ລວມທັງກຳນົດເອົາວັນທີ 24 ມິຖຸນາ 2026 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

此外，老-中证券已通过老-中证券公众公司网站（http://www.lcs.com.la）以及老挝证券交易所信息系统（www.lsx.com.la）公布了 2026 年第一次临时股东会的议程及所有供审议和表决的附件。同时，已确定股权登记日为 2026 年 6 月 24 日（确认有权出席本次股东会的股东资格），相关信息均已完整披露。

ຫວັງຢ່າງຍິ່ງວ່າ ທ່ານຄົງສະລະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

我们殷切期望您能拨冗出席本次会议。

ປະທານສະພາບໍລິຫານ

董事长

ທ່ານ ໜູໄຊ ພູມສຸວັນ

努赛·普苏万

ເອກະສານຄັດຕິດ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026

1. ເອກະສານຄັດຕິດ 1: ວາລະກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026;
2. ເອກະສານຄັດຕິດ 2: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບລຈ;
3. ເອກະສານຄັດຕິດ 3: ຊີວະປະຫວັດຂອງ ທ່ານ ຫວາງ ເວີຍ, ທ່ານ ເຈຍ ຮຸຍ ແລະ ທ່ານ ຣສ. ປອ ໄຊພອນ ກອງມະນີລາ;
4. ເອກະສານຄັດຕິດ 4: ໃບມອບສິດ ແລະ ຊີວະປະຫວັດຂອງສະມາຊິກອິດສະລະ;
5. ເອກະສານຄັດຕິດ 5: ຄຳແນະນຳກ່ຽວກັບການລົງຄະແນນສຽງ;
6. ເອກະສານຄັດຕິດ 6: ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ;
7. ເອກະສານຄັດຕິດ 7: ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026.

中证券 2026 年第一次临时股东会附件

1. 附件 1：老-中证券 2026 年第一次临时股东会会议议程；
2. 附件 2：审议变更老-中证券首次公开募股募集资金使用方案；
3. 附件 3：王崴先生简历，贾辉先生简历和赛彭·功马尼副教授、博士简历
4. 附件 4：授权委托书和独立董事简历；
5. 附件 5：表决说明；
6. 附件 6：出席会议所需文件及身份证明指引；
7. 附件 7：老-中证券 2026 年第一次临时股东会会议地点地图。

ໝາຍເຫດ:

备注：

1. ຜູ້ຖືຮຸ້ນທຸກທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງຕະຫຼາດຫຼັກຊັບ http://www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: +85621 454361-4 ເລີ່ມແຕ່ວັນທີ 24 ມິຖຸນາ 2026 ເປັນຕົ້ນໄປ.

   所有股东均可登录老挝证券交易所网站（http://www.lsx.com.la）下载邀请函及相关附件。此外，自 2026 年 6 月 24 日起，股东也可前往老挝证券交易所大楼 4 楼证券结算托管部领取会议邀请函（地址：首都万象市赛色塔县 T4 路彭覃村，电话：+85621 454361-4）。

2. ສໍາລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານໍາບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ.
若股东亲自出席会议，请于会议当天携带本人身份证、户口本或护照（外国股东适用）以便签到登记时出示。

3. ສໍາລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ພ້ອມລົງລາຍເຊັນໃນໃບມອບສິນຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.
如股东委托代表出席会议并代为表决，请按要求正确、完整填写随附的授权委托书并签字。

ຜູ້ປະສານງານຂອງ ບລຈ:

老-中证券联系人：

1. ທ່ານ ນາງ ຈັນພະພອນ ສີຫາລາດ, ໂທ: 020 5599 5868
   占帕蓬·西哈拉女士，电话：020 5599 5868

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026

老-中证券公众公司

2026 年第一次临时股东会议议程

ເວລາ 时间	**ວາລະ ແລະ ເນື້ອໃນກອງປະຊຸມ** 会议议案内容	**ຜູ້ນຳສະເໜີ/ ພາກສ່ວນ ຮັບຜິດຊອບ** 报告人/负责部门
ນ.ອ.08:30-09:00 北京时间 09:30-10:00	ລົງທະບຽນ 签到	ກອງເລຂາ 秘书处
ນ.ອ.09:00-09:10 北京时间 10:00-10:10	ປະທານກອງປະຊຸມ ກ່າວເປີດກອງປະຊຸມ 会议主席宣布会议开始	ທ່ານ ໜູໄຊ ພູມ ສຸວັນ 努赛·普苏万
ນ.ອ.09:10-09:25 北京时间 10:10-10:25	ວາລະ 01: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບລຈ 议案一：审议变更老-中证券首次公开募股募集资金使用方案	ລາຍງານໂດຍ: ທ່ານ ລິນລີ ຜູ້ອຳນວຍການ 报告人： 李林 总经理 ພິຈະລະນາ ແລະ ຮັບຮອງ ໂດຍ: ກອງປະຊຸມຜູ້ຖືຮຸ້ນ ດ້ວຍຮູບແບບລົງຄະແນນສຽງ. 股东会审议，并进行投票表决
ນ.ອ.09:25-09:35 北京时间 10:25-10:35	ວາລະ 02: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບຄະນະອຳນວຍການ ບລຈ 议案二：审议变更老-中证券管理层成员	
ນ.ອ.09:35-09:50 北京时间 10:35-10:50	ວາລະ 03: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບສະມາຊິກ ສະພາບໍລິຫານ ບລຈ 议案三：审议变更老-中证券董事会成员	
ນ.ອ.09:50-10:00 北京时间 10:50-11:00	ປະທານກອງປະຊຸມ ກ່າວປິດກອງປະຊຸມ 会议主席宣布会议结束	ທ່ານ ໜູໄຊ ພູມ ສຸວັນ 努赛·普苏万

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026

老-中证券公众公司

2026 年第一次临时股东会议议程

ເວລາປະຊຸມ: ວັນທີ 9 ກໍລະກົດ 2026 ເວລາ 9:00-10:00

会议时间：2026 年 7 月 9 日，北京时间 10:00-11:00

ຮູບແບບກອງປະຊຸມ: ປະຊຸມເຊິ່ງໜ້າ ແລະ ປະຊຸມອອນລາຍ

会议组织形式：线下会议结合线上会议

ຜູ້ຮຽກປະຊຸມ: ທ່ານ ໜູໄຊ ພູມສຸວັນ ປະທານສະພາບໍລິຫານ ບລຈ

会议召集：努赛·普苏万 董事长

ປະທານກອງປະຊຸມ: ທ່ານ ໜູໄຊ ພູມສຸວັນ

会议主席：努赛·普苏万

ຜູ້ເຂົ້າຮ່ວມປະຊຸມ: ຜູ້ຖືຮຸ້ນທັງໝົດ ຂອງ ບລຈ

参会人员：老-中证券全体股东

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026

老-中证券公众公司

2026 年第一次临时股东会议议程

ວາລະທີ 01: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບລຈ (ເອກະສານຄັດຕິດ 02).

议案一：审议变更老-中证券首次公开募股募集资金使用方案（详见附件 02）。

ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈະລານາ ແລະ ຮັບຮອງການປັບປຸງແຜນການນຳໃຊ້ທຶນ 10,000,000,000 ກີບຈາກການລົງທຶນສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ມາເປັນການເພີ່ມກະແສເງິນສົດ ຂອງ ບລຈ, ພ້ອມທັງລາຍງານ ສຄຄຊ ແລະ ເປີດເຜີຍຂໍ້ມູນດັ່ງກ່າວຜ່ານ ຕລຊລ. ບລຈ ຈະມີແຜນນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຮັບປະກັນຄ່າໃຊ້ຈ່າຍ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື (MTS) ເພື່ອໃຫ້ພະແນກນາຍໜ້າ ຊື້-ຂາຍ ຫຼັກຊັບ ສາມາດອຳນວຍຄວາມສະດວກແກ່ການຊື້-ຂາຍຫຼັກຊັບ ຂອງ ລູກຄ້າ, ດຶງດູດນັກລົງທຶນມາເປີດບັນຊີນຳ ບລຈ ພ້ອມທັງເພີ່ມລາຍຮັບນາຍໜ້າຊື້-ຂາຍຫຼັກຊັບ, ສ່ວນຈຳນວນເງິນທີ່ເຫຼືອ ຈະລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ. ມອບສິດໃຫ້ ບລຈ ຮ່າງແຜນງົບປະມານ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ. ໃນໄລຍະດັ່ງກ່າວ, ເພື່ອຍົກສູງປະສິດທິພາບແຫ່ງການນຳໃຊ້ທຶນຮອນ, ເຫັນດີນຳໃຊ້ທຶນທັງໝົດ 10,000,000,000 ກີບດັ່ງກ່າວ, ລົງທຶນໃສ່ເງິນຝາກນຳທະນຳຄານທຸລະກິດ, ຈົດຮອດສະພາບໍລິຫານເຫັນດີຮັບຮອງ ແຜນງົບປະມານ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ດັ່ງລາຍລະອຽດໃນເອກະສານຄັດຕິດ 02.

特提交股东会审议将原计划用于设立基金管理公司的 10,000,000,000 基普（约合 306.65 万元），调整为用于补充老-中证券的流动资金，并向证管委办公厅报告以及通过老交所进行信息披露。老-中证券计划将上述资金用于保障手机证券交易系统（MTS）开发软硬件费用，让经纪业务部门能为客户证券交易提供便利，吸引投资者到老-中证券开户并增加经纪业务收入，剩余资金将用于银行存款投资。授权老-中证券起草手机证券交易系统开发软硬件费用预算，报董事会审批。期间，为提高资金使用效率，允许将上述 10,000,000,000 基普（约合 306.65 万元）全部投资于银行存款，直至董事会审议通过手机证券交易系统开发软硬件费用预算，详见附件 02。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະ 02: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບຄະນະອຳນວຍການ ບລຈ.

议案二：审议变更老-中证券管理层成员。

ສະເໜີກອງປະຊຸມຮັບຮອງແຕ່ງຕັ້ງ ຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຜູ້ໃໝ່ ຕາມການສະເໜີລາຍຊື່ຈາກທາງຝ່າຍຂາຮຸ້ນ ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນຈຳກັດ.

特提请股东会审议并批准，根据太平洋证券股份有限公司股东方推荐，任命新任总经理及法定代表人。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ວາລະ 03: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບສະມາຊິກສະພາບໍລິຫານ ບລຈ.

议案三：审议变更老-中证券董事会成员。

ສະເໜີກອງປະຊຸມຮັບຮອງແຕ່ງຕັ້ງ **ທ່ານ ຫວາງ ເວີ** ເປັນສະມາຊິກສະພາບໍລິຫານທີ່ມີຮ່ວມສ່ວນການບໍລິຫານ ແລະ **ທ່ານ ເຈຍ ຮຸຍ** ເປັນສະມາຊິກອິດສະລະ ເພື່ອປ່ຽນແທນ **ທ່ານ ລິນ ລີ** ອະດີດສະມາຊິກສະພາບໍລິຫານທີ່ມີຮ່ວມສ່ວນການບໍລິຫານ ແລະ **ທ່ານ ຫວາງ ເວີ** ອະດີດສະມາຊິກອິດສະລະ ທີ່ໄດ້ລາອອກໄປ ຕາມໜັງສືສະເໜີ ລົງວັນທີ 23 ມິຖຸນາ 2026. ພ້ອມທັງສະເໜີຮັບຮອງແຕ່ງຕັ້ງ **ທ່ານ ຣສ. ປອ ໄຊພອນ ກອງມະນີລາ** ເປັນສະມະຊິກອິດສະລະ ຕາມໜັງສືສະເໜີ ສະບັບເລກທີ 02/ທສກ , ລົງວັນທີ 23 ມິຖຸນາ 2026, ເພື່ອປ່ຽນແທນ **ທ່ານ ຣສ. ປອ. ປິຍະ ວົງພິດ** ທີ່ໄດ້ລາອອກຈາກຕຳແໜ່ງສະມາຊິກອິດສະລະ.

特提股东会审议任命**王崴先生**担任执行董事及**贾辉先生**担任独立董事代替辞职的**李林先生**前任执行董事以及**王崴先生**前任独立董事，根据太平洋证券股份有限公司 2026 年 6 月 23 日签发的《推荐函》。根据农业促进银行 2026 年 6 月 23 日签发的《推荐函》（[农行]第 02 号），审议任命**赛彭·功马尼副教授、博士**担任独立董事代替辞职的**比亚·翁匹副教授、博士**前任独立董事。

ດັ່ງນັ້ນ, ພາຍຫຼັງການຮັບຮອງໃນຄັ້ງນີ້ ສະມາຊິກສະພາບໍລິຫານ ບລຈ 09 ທ່ານ ຈະມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ໝູໄຊ ພູມສຸວັນ ເປັນປະທານສະພາບໍລິຫານ;
2. ທ່ານ ລີ ຊາງເຫວີ່ຍ (MR LI CHANGWEI) ເປັນຮອງປະທານສະພາບໍລິຫານ;
3. ທ່ານ ໂຈ ຄຸນ (MR ZHOU KUN) ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
4. ທ່ານ ຈາງ ຫົງບິນ (MR ZHANG HONGBIN) ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
5. ທ່ານ ສີມພິງ ບໍລິບຸດ ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
6. ທ່ານ ຫວາງ ເວີ່ຍ (MR WANG WEI) ເປັນສະມາຊິກສະພາບໍລິຫານ ທີ່ມີສ່ວນຮ່ວມໃນການບໍລິຫານ;
7. ທ່ານ ຣສ. ປອ ໄຊພອນ ກອງມະນີລາ ເປັນສະມາຊິກອິດສະລະ;
8. ທ່ານ ເຈຍ ຮຸ່ຍ (MR JIA HUI)ເປັນສະມາຊິກອິດສະລະ;
9. ທ່ານ ນະ ຈັນຕະລີວີ ເປັນສະມາຊິກອິດສະລະ.

股东会审议任命董事会成员以后，老-中证券 09 位董事会成员名单如下：

1. 努赛·普苏万担任董事长；
2. 李长伟担任副董事长；
3. 周昆担任非执行董事；
4. 张洪斌担任非执行董事；
5. 颂蓬·波里布担任非执行董事；
6. 王崴担任执行董事；
7. 赛彭·功马尼副教授、博士担任独立董事；
8. 贾辉任独立董事；
9. 纳·占达里翁任独立董事。

ຄຳເຫັນຂອງສະພາບໍລິຫານ:

董事会意见：

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ.

董事会经审议后，同意提交股东会审议。

ຄະແນນສຽງທີ່ຕ້ອງໃຊ້:

表决方式及通过条件：

ວາລະນີ້ຈະຖືວ່າຖືກຮັບຮອງເອົາ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

本议案在出席股东会的股东所持表决权中，经超过半数同意即视为通过。

ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

审议变更老-中证券公众公司首次公开募股募集资金使用方案

- ອີງຕາມໜັງສືແຈ້ງຕອບ ກ່ຽວກັບການອະນຸມັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເລກທີ 557/ສຄຄຊ, ລົງວັນທີ 17 ມີນາ 2025;
- ອີງຕາມໜັງສືສະເໜີ ກ່ຽວກັບ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການນຳໃຊ້ທຶນທີ່ລະດົມໄດ້ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເລກທີ 392/ສຄຄຊ, ລົງວັນທີ 12 ທັນວາ 2025.
- 根据证券管理委员会办公厅 2025 年 3 月 17 日下发的《关于批准公开发行股票的批复》（[证管委办公厅]第 55 号）；
- 根据证券管理委员会办公厅 2025 年 12 月 12 日下发的《关于汇报募集资金使用计划执行进展的建议》（[证管委办公厅]第 392 号）。

ບລຈ ໄດ້ຍື່ນສະເໜີຂໍອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ເຖິງ ສຄຄຊ ແລະ ໃນວັນທີ 17 ມີນາ ໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນຄັ້ງທຳອິດຈາກ ສຄຄຊ. ວັນທີ 3 ເມສາ, ບລຈ ໄດ້ສຳເລັດການດຳເນີນການອອກຈຳໜ່າຍອອກຈຳໜ່າຍຮຸ້ນໃໝ່ລົງດ້ວຍດີ, ລວມຮຸ້ນທີ່ອອກຈຳໜ່າຍຈຳນວນ 111,111,200 ຮຸ້ນ, ມູນຄ່າກຳນົດ 100 ກີບ/ຮຸ້ນ, ລາຄາອອກຈຳໜ່າຍ 130 ກີບ/ຮຸ້ນ, ໄດ້ລະດົມທຶນລວມ 14,444,456,000 ກີບ. ໃນນັ້ນປະກອບມີ ເງິນສ່ວນເກີນມູນຄ່າຮຸ້ນຈຳນວນ 2,360,038,519 ກີບ ແລະ ເງິນເພີ່ມທຶນຈົດທະບຽນຈຳນວນ 11,111,120,000 ກີບ. ໃນວັນທີ 9 ເມສາ ໄດ້ຮັບໜັງສືແຈ້ງຕອບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຂອງ ບລຈ ຈາກ ສຄຄຊ. ໃນວັນທີ 10 ເມສາ, ໄດ້ຍື່ນໃບສະເໜີຂໍຈົດທະບຽນຮຸ້ນ ທີ່ ຕລຊລ, ວັນທີ 22 ເມສາ ໄດ້ຮັບໃບອະນຸຍາດການຈົດທະບຽນຮຸ້ນຈາກ ຕລຊລ. ໃນວັນທີ 25 ເມສາ, ບລຈ ໄດ້ຈັດພິທີສະຫຼອງວັນຊື້ ຂາຍຮຸ້ນຄັ້ງທຳອິດ ແລະ ໄດ້ເຊັນສັນຍາຂຶ້ນທະບຽນຊື້ ຂາຍກັບ ຕລຊລ, ເປັນການເຂົ້າຈົດທະບຽນຢ່າງເປັນທາງການ.

老-中证券于 2025 年 1 月 13 日向证管委办公厅正式提交《首次公开发行股票申请》，3 月 17 日获得证管委办公厅颁发的《首次公开发行股票许可证》。4 月 3 日公司顺利完成新股发行工作，共计发行 111,111,200 股，面值 100 基普/股（约合 0.031 元/股），公开发行价格 130 基普/股（约合 0.040 元/股），募集资金 14,444,456,000 基普（约合 442.95 万元）。其中包括，股份溢价 2,360,038,519 基普（约合 72.37 万元），增加注册资本金 11,111,120,000 基普（约合 340.73 万元）。4 月 9 日获得证管委办公厅《关于确认老-中证券公众公司公开发行股票结果的批复》。4 月 10 日向老交所提交《股票登记申请》并于 4 月 22 日获得老交所《关于批准股票登记的批复》。4 月 25 日公司举行首个交易日庆典活动，与老交所签署上市协议，正式上市。

ອີງຕາມໜັງສືສະເໜີ ກ່ຽວກັບ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການນຳໃຊ້ທຶນທີ່ລະດົມໄດ້ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເລກທີ 392/ສຄຄຊ (ເອກະສານຄັດຕິດທີ 1), ລົງວັນທີ 12 ທັນວາ 2025. ສຄຄຊ ໄດ້ແຈ້ງໃຫ້ຊາບວ່າ: ຜ່ານການຕິດຕາມແຜນການນຳໃຊ້ເງິນທຶນ ທີ່ລະດົມໄດ້ຈາກການອອກຈຳໜ່າຍຫຼັກຊັບ ຂອງ ບລຈ ຈຳນວນ 14,444,456,000 ກີບ ເຊິ່ງມີເປົ້າໝາຍການນຳໃຊ້ເງິນທຶນ ໃນການສ້າງຕັ້ງບໍລິສັດບໍລິຫານກອງທຶນ ເພື່ອການລົງທຶນ ຈຳນວນ 10,000,000,000 ກີບ ຕາມແຜນການດຳເນີນທຸລະກິດ ຂອງບໍລິສັດເອງ ຈາກການຕິດຕາມການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ບໍລິສັດຍັງບໍ່ສາມາດເຮັດໄດ້ຕາມແຜນທີ່ຂຶ້ນໄວ້. ສະນັ້ນ, ເພື່ອເປັນການປະຕິບັດໃຫ້ສອດຄ່ອງ ຕາມລະບຽບການທີ່ກຳນົດໄວ້ ສຄຄຊ ຈຶ່ງສະເໜີມາຍັງທ່ານ ເພື່ອລາຍງານຄືນຄວາມຄືບໜ້າ, ສາເຫດ, ຂໍ້ຄົງຄ້າງ ແລະແຜນລະອຽດໃນການຕໍ່ໜ້າ ກ່ຽວກັບການຈັດຕັ້ງປະຕິບັດແຜນການນຳໃຊ້ທຶນດັ່ງກ່າວ ແລະ ຊີ້ແຈງສາເຫດຕໍ່ຜູ້ລົງທຶນຊາບ. ພ້ອມນີ້, ໃຫ້ບໍລິສັດ ບລຈ ຮີບຮ້ອນໃນການຄົ້ນຄວ້າແຕ່ງຕັ້ງ ສະມາຊິກອິດສະລະ ທີ່ບໍ່ຄົບເງື່ອນໄຂ ຕາມແຈ້ງຕອບ ຂອງ ສຄຄຊ, ສະບັບເລກທີ 55/ສຄຄຊ(ເອກະສານຄັດຕິດທີ 2), ລົງວັນທີ 17 ມີນາ 2025. (ກຳນົດສົ່ງພາຍໃນວັນທີ 19 ທັນວາ 2025). ຕາມການຊີ້ນຳວຽກງານ ຂອງ ສຄຄຊ, ບລຈ ໄດ້ຍື່ນ ບົດລາຍງານ ກ່ຽວກັບ ລາຍງານຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ການຄົ້ນຄວ້າແຕ່ງຕັ້ງ ສະມາຊິກອິດສະລະ ທີ່ບໍ່ຄົບເງື່ອນໄຂ ຂອງ ບລຈ, ເລກທີ 590/ບລຈ, ລົງວັນທີ 19 ທັນວາ 2025 (ເອກະສານຄັດຕິດທີ 3). ປະຈຸບັນ, ສຳລັບທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນຄັ້ງທຳອິດ ຂອງ ບລຈ. ຊຶ່ງໃນນັ້ນ, 4,444,456,000 ກີບທີ່ເພື່ອເພີ່ມເງິນໝູນວຽນນັ້ນ, ໄດ້ນຳໃຊ້ຢ່າງເປັນປົກກະຕິແລ້ວ. ບ້ວງເງິນຈຳນວນ 10,000,000,000 ກີບເພື່ອສ້າງຕັ້ງ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນຕາມເປົ້າໝາຍນຳໃຊ້ທຶນເດີ່ມ, ແມ່ນຍັງຝາກຢູ່ ທຄຕລ ບັນຊີອອກຊື່ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ບັນຊີເລກທີ: 1011300015239, ບໍ່ທັນນຳໃຊ້ເທື່ອ.

根据证券管理委员会办公厅 2025 年 12 月 12 日下发的《关于汇报募集资金使用计划执行进展的建议》（[证管委办公厅]第 392 号）。证管委办公厅告知，通过跟进老-中证券公众公司（老-中证券）通过股票发行募集的 14,444,456,000 基普资金使用计划。其中，根据老-中证券自身经营计划有 10,000,000,000 基普计划用于设立投资基金管理公司。通过跟进实际执行情况发现，老-中证券尚未落实既定计划。因此，根据证管委办公厅相关规定要求，建议贵司汇报关于上述基金使用计划执行进展、滞后原因及下一步具体工作计划，并向投资者披露具体原因。同时，要求老-中证券根据 2025 年 3 月 17 日下发的《关于批准公开发行股票的批复》（[证管委办公厅]第 55 号）（详见附件 1），尽快研究任命独立董事，解决独立董事不符合条件的问题（要求于 2025 年 12 月 19 日前报告）（详见附件 2）。根据证管委办公厅工作要求，老-中证券于 2025 年 12 月 19 日向证管委办公厅提交了《老-中证券关于募集资金使用计划执行情况及研究更换不符合条件独立董事进展情况的报告》（[老-中证券]第 590 号）（详见附件 3）。目前，老-中证券上市募集资金中 4,444,456,000 用于补充流动资金部分，已经正常投入使用。原计划用于设立投

资基金管理公司的 10,000,000,000 基普仍存放于外贸银行，账户名称：老-中证券公众公司募集资金专用账户，账户号码：1011300015239，尚未使用。

ການທີ່ໄດ້ຮັບຜົນສຳເລັດ ອອກຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ມວນຊົນ (IPO) ຂອງ ບລຈ, ໄດ້ເຮັດໃຫ້ບັນດາວິສາຫະກິດ ແລະ ນັກລົງທຶນ ເພີ່ມຄວາມເຊື່ອໝັ້ນຕໍ່ຕະຫຼາດທຶນທີ່ໄດ້ງຽບເປັນເວລາ 5 ປີ. ພາຍຫຼັງ ບລຈ ໄດ້ຈົດທະບຽນ ຢູ່ ຕລຊລ, ວຽກງານເປັນທີ່ປຶກສາທາງດ້ານການເງິນ ແລະຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ໄດ້ເພີ່ມຂຶ້ນຫຼາຍ. ບລຈ ໄດ້ສູ້ຊົນເພື່ອສຳເລັດ ເປັນທີ່ປຶກສາທາງດ້ານການເງິນ ແລະຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃຫ້ແກ່ 2 ໂຄງການ, ຄື: IPO ຂອງທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL).

老-中证券首次公开募股（IPO）取得的成功，增强了企业和投资者对沉寂了 5 年的资本市场的信心，公司上市后财务顾问与证券发行承销业务显著增长。老-中证券集中全力完成了联合开发银行公众公司（JDB）的首次公开发行（IPO），以及老挝外贸银行公众公司（BCEL）向原股东配股及公开发行股票两个项目的财务顾问和承销业务。

ນອກຈາກນັ້ນ, ໃນປີ 2026 ບລຈ ຍັງມີແຜນຈະສືບຕໍ່ຊຸກຍູ້ໂຄງການ IPO ຂອງທະນາຄານ BIC ແລະ ບໍລິສັດ ຍອດງຶ່ມພາວເວີ ທີ່ໄດ້ເຊັນສັນຍາທີ່ປຶກສາດ້ານການເງິນແລ້ວ, ແລະທະນາຄານລາວຈີນ ທີ່ໄດ້ເຊັນສັນຍາ MOU.

此外，2026 年老-中证券仍将继续推进以下项目：投资商业银行（BIC）和略乌电力的 IPO 财务顾问项目（已签署财务顾问协议），老-中银行的 IPO 财务顾问项目（已签署合作谅解备忘录 MOU）。

ດ້ວຍເຫດນັ້ນ, ບລຈ ເຫັນວ່າ ປະຈຸບັນ ຍັງບໍ່ທັນມີຄວາມພ້ອມດ້ານບຸກຄະລາກອນ ເພື່ອສ້າງຕັ້ງ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ. ອີກດ້ານໜຶ່ງ, ຜ່ານການເກັບກຳຂໍ້ມູນຄົ້ນຄວ້າ ເຫັນວ່າຄ່າໃຊ້ຈ່າຍໃນການພັດທະນາລະບົບກອງທຶນເປີດ ແມ່ນມີຄ່າສູງຫຼາຍ. ຖ້າວ່າ ບລຈ ເພື່ອຂະຫຍາຍທຸລະກິດໄປຂອບເຂດກອງທຶນເປີດ ໂດຍສ້າງຕັ້ງບໍລິສັດ ບໍລິການກອງທຶນເພື່ອການລົງທຶນ, ຈະເກີດຄວາມສ່ຽງດ້ານການລົງທຶນ.

鉴于上述情况，老-中证券认为目前在人才储备方面尚未具备设立投资基金管理公司的充分条件。另一方面，经调研发现，开发和建设开放式基金系统的成本非常高，如为拓展基金管理业务进入公募基金领域而设立投资基金管理公司，将可能带来较大的投资风险。

ອີງຕາມ ຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະບໍລິສັດຈົດທະບຽນ (ສະບັບປັບປຸງ) ເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024. ມາດຕາ 11 ຮູບແບບການລາຍງານກະທັນຫັນ ໄດ້ກຳນົດວ່າ: ການລາຍງານ ແບບກະທັນຫັນແມ່ນ ການລາຍງານ ຕາມເຫດການໃດໜຶ່ງທີ່ເກີດຂຶ້ນ. ບໍລິສັດ ອອກຈຳໜ່າຍຫຼັກຊັບ ແລະບໍລິສັດຈົດທະບຽນ ຕ້ອງລາຍງານ ຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນ

ເວລາ 24 ຊົ່ວໂມງ ໃນອັນລັດຖະການ ກໍລະນີ ມີເຫດການໃດໜຶ່ງເກີດຂຶ້ນດັ່ງນີ້: ຂໍ້ “6. ການປ່ຽນແປງທີ່ສຳຄັນ ໃນລາຍຈ່າຍເພື່ອການລົງທຶນ”

根据证券管理委员会 2024 年 12 月 11 日 颁布的《关于证券发行公司及上市公司报告与信息披露的规定（修订版）》（[证管委]第 15 号） “第十一条 临时报告” 规定“临时报告是指针对某一特定事件的发生而提交的报告。证券发行公司及上市公司若发生以下任一情形，应在 1 个工作日（24 小时）内向证券监督管理委员会办公厅报告：”“6. 资本性支出出现重大变动；”

ສະນັ້ນ, ຈຶ່ງນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈະລານາ ແລະ ຮັບຮອງການປັບປຸງແຜນການນຳໃຊ້ທຶນ 10,000,000,000 ກີບຈາກການລົງທຶນສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ມາເປັນການເພີ່ມກະແສເງິນສົດ ຂອງ ບລຈ, ພ້ອມທັງລາຍງານ ສຄຄຊ ແລະ ເປີດເຜີຍຂໍ້ມູນດັ່ງກ່າວຜ່ານ ຕລຊລ. ບລຈ ຈະມີແຜນນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຮັບປະກັນຄ່າໃຊ້ຈ່າຍ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື (MTS) ເພື່ອໃຫ້ພະແນກນາຍໜ້າ ຊື້-ຂາຍ ຫຼັກຊັບ ສາມາດອຳນວຍຄວາມສະດວກແກ່ການຊື້-ຂາຍຫຼັກຊັບ ຂອງລູກຄ້າ, ດຶງດູດນັກລົງທຶນມາເປີດບັນຊີນຳ ບລຈ ພ້ອມທັງເພີ່ມລາຍຮັບນາຍໜ້າຊື້-ຂາຍຫຼັກຊັບ, ສ່ວນຈຳນວນເງິນທີ່ເຫຼືອ ຈະລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ. ມອບສິດໃຫ້ ບລຈ ຮ່າງແຜນງົບປະມານ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ. ໃນໄລຍະດັ່ງກ່າວ, ເພື່ອຍົກສູງປະສິດທິພາບແຫ່ງການນຳໃຊ້ທຶນຮອນ, ເຫັນດີນຳໃຊ້ທຶນທັງໝົດ 10,000,000,000 ກີບດັ່ງກ່າວ, ລົງທຶນໃສ່ເງິນຝາກນາທະນຳຄານທຸລະກິດ, ຈົດຮອດສະພາບໍລິຫານເຫັນດີຮັບຮອງ ແຜນງົບປະມານ Software and Hardware ແຫ່ງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື.

特提交股东会审议将原计划用于设立基金管理公司的 10,000,000,000 基普（约合 306.65 万元），调整为用于补充老-中证券的流动资金，并向证管委办公厅报告以及通过老交所进行信息披露。老-中证券计划将上述资金用于保障手机证券交易系统（MTS）开发软硬件费用，让经纪业务部门能为客户证券交易提供便利，吸引投资者到老-中证券开户并增加经纪业务收入，剩余资金将用于银行存款投资。授权老-中证券起草手机证券交易系统开发软硬件费用预算，报董事会审批。期间，为提高资金使用效率，允许将上述 10,000,000,000 基普（约合 306.65 万元）全部投资于银行存款，直至董事会审议通过手机证券交易系统开发软硬件费用预算。

ເອກະສານຄັດຕິດ 1: ໜັງສືແຈ້ງຕອບ ກ່ຽວກັບການອະນຸມັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

ເອກະສານຄັດຕິດ 2: ໜັງສືສະເໜີ ກ່ຽວກັບ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການນຳໃຊ້ທຶນທີ່ລະດົມໄດ້ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

ເອກະສານຄັດຕິດທີ 3: ບົດລາຍງານ ກ່ຽວກັບລາຍງານຄວາມຄືບໜ້າກ່ຽວກັບການຈັດຕັ້ງປະຕິບັດແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະການຄົ້ນຄວ້າແຕ່ງຕັ້ງ ສະມາຊິກອິດສະລະ ທີ່ບໍ່ຄົບເງື່ອນໄຂ ຂອງ ບລຈ.

附件 1：证券管理委员会办公厅《关于批准公开发行股票的批复》；
附件 2：证券管理委员会办公厅《关于汇报募集资金使用计划执行进展的建议》；
附件 3：《老-中证券关于募集资金使用计划执行情况及研究更换不符合条件独立董事进展情况的报告》

ໝາຍເຫດ: ອັດຕາແລກປ່ຽນແມ່ນອີງຕາມ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ໃນວັນທີ 31 ມີນາ 2025
1 ຢວນເທົ່າກັບ 3,261.00 ກີບ.

注：本文汇率根据老挝外贸银行 2026 年 3 月 31 日外汇牌价 1 元=3,261.00 基普。



ທ່ານ ຫວາງ ເວີຍ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 25 ຕຸລາ 1972

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1992-1994: ຊັ້ນສູງ ສາຂາວິຊາຄະນະເອກະສານ, ມະຫາວິທະຍາໄລແຂວງຢຸນນານ

ປະຫວັດການເຮັດວຽກ:

ປີ 1994-2014: ຫົວໜ້າພະແນກ, ວຽກງານຄະນະກຳມະການພັກ, ບໍລິສັດສາກົນຢຸນນານ

ປີ 2014-ປະຈຸບັນ: ຫົວໜ້າພະແນກ, ວຽກງານຂອງຂະແໜງການຕົວແທນ ສປປ ລາວ, ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ



王崴先生

个人信息：

出生日期：1972 年 10 月 25 日

国籍：中国

职务：董事

教育背景：

1992-1994 年: 云南大学档案学（行政信息方向），大专

工作经历：

1994-2014 年：云南国际公司部门经理

2014 年至今：太平洋证券股份有限公司老挝代表处部门总经理



ທ່ານ ປອ. Jia Hui

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 28 ຕຸລາ 1976

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກອິດສະລະ

ປະຫວັດການສຶກສາ:

ປີ 1999-2002: ປະລິນຍາຕີ ສາຂາເສດຖະສາດສາກົນ, ມະຫາວິທະຍາໄລເຫຼີນໝິນ ແຫ່ງປະເທດຈີນ

ປີ 1999-2002: ປະລິນຍາໂທ ສາຂາກົດໝາຍ, ມະຫາວິທະຍາໄລລັດຖະສາດ ແລະ ນິຕິສາດແຫ່ງປະເທດຈີນ

ປີ 2007-2008: ປະລິນຍາໂທ ສາຂາກົດໝາຍ, ມະຫາວິທະຍາໄລນິວຢອກ, ປະເທດ ສະຫະລັດອາເມລິກາ

ປີ 2016-2021: ປະລິນຍາເອກ ສາຂາກົດໝາຍສາກົນ, ມະຫາວິທະຍາໄລລັດຖະສາດ ແລະ ນິຕິສາດແຫ່ງປະເທດຈີນ

ປີ 2022-2025: ປະລິນຍາເອກ ສາຂາບໍລິຫານທຸລະກິດ, ມະຫາວິທະຍາໄລເບລຮາເວນ , ປະເທດສະຫາລັດອາເມລິກາ

ປະຫວັດການເຮັດວຽກ:

ປີ 2002-2005: ທະນາຍຄວາມ, ບໍລິສັດ ທີ່ປຶກສາກົດໝາຍ ປັກກິ່ງ ຈີນເສີ່ງຖິ່ງຕ້າ

ປີ 2005-2006: ທະນາຍຄວາມ, ບໍລິສັດ ທີ່ປຶກສາກົດໝາຍ ປັກກິ່ງ ຈີນຕູ້

ປີ 2006-2012: ທະນາຍຄວາມ, ຫ້ອງການຕົວແທນ ປະຈຳປັກກິ່ງຂອງ ບໍລິສັດທີ່ ປຶກສາກົດໝາຍ ດູເວ ແອນ ດູໂບ (ສະຫະລັດອະເມລິກາ)

ປີ 2012-ປະຈຸບັນ: ຮຸ້ນສ່ວນທົ່ວໂລກ, ບໍລິສັດ ທີ່ປຶກສາກົດໝາຍ ປັກກິ່ງ ເຕີເຫີງ

ປີ 2020-ປະຈຸບັນ: ຫົວໜ້າ, ບໍລິສັດ ທີ່ປຶກສາກົດໝາຍ ປັກກິ່ງ ເຕີເຫີງ (ລາວ)

ປີ 2024-ປະຈຸບັນ: ຫົວໜ້າຮ່ວມ, ບໍລິສັດ ທີ່ປຶກສາກົດໝາຍ ປັກກິ່ງ ເຕີເຫີງ (ອິນໂດເນເຊຍ)



贾辉

个人信息：

出生日期（日/月/年）：1976 年 10 月 28 日

国籍：中国

职务：独立董事

教育背景：

1995-1999：中国人民大学，国际经济专业，学士

1999-2002：中国政法大学，法律专业，硕士

2007-2008：美国纽约大学法学院，法律专业，硕士

2016-2021：中国政法大学，国际法专业，博士

2022-2025：美国贝瀚文大学，工商管理专业，博士

工作经历：

2002-2005：北京金诚同达律师事务所，律师

2005-2006：北京金杜律师事务所，律师

2006-2012：美国杜威路博律师事务所北京代表处，律师

2012 年至今：北京德恒律师事务所，全球合伙人

2020 年至今：北京德恒（老挝）律师事务所，主任

2024 年至今：北京德恒（印尼）律师事务所，联席主任



ທ່ານ ຮສ. ປອ. ໄຊພອນ ກອງມະນີລາ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 30 ທັນວາ 1973

ສັນຊາດ: ລາວ

ຕຳແໜ່ງ: ສະມາຊິກອິດສະລະ

ປະຫວັດການສຶກສາ:

ປີ 1992-1995: ປະລິນຍາຕີ (ທຽບເທົ່າ) ສາຂາໄຟຟ້າສື່ສານ, KMITNB, ປະເທດໄທ

ປີ 1997-2001: ປະລິນຍາຕີ ສາຂາການບໍລິຫານທຸລະກິດ, University of the Thai Chamber of Commerce, ປະເທດໄທ

ປີ 2004-2006: ປະລິນຍາໂທ ສາຂາການບໍລິຫານທຸລະກິດ, Hiroshima University, ປະເທດຍີ່ປຸ່ນ

ປີ 2006-2009: ປະລິນຍາເອກ ສາຂາການບໍລິຫານທຸລະກິດ, Hiroshima University, ປະເທດຍີ່ປຸ່ນ

ປີ 2003: CPA Lao PDR, ກະຊວງການເງິນ, ສປປ ລາວ

ປີ 2010: CPA Australia, CPA Australia, ປະເທດອິດສະຕາລີ

ປະຫວັດການເຮັດວຽກ:

ປີ 1995-1997: ວິສະວະກອນໂທລະຄົມ, ລັດວິສາຫະກິດໂທລະຄົມລາວ

ປີ 2000-2001: ຜູ້ກວດສອບໂຄງການ, Hi-Key Aircond Technology Co., Ltd.

ປີ 2001: ຜູ້ຈັດການ ຝ່າຍການຕະຫຼາດ ແລະ ການປະຕິບັດງານ, Kharoonroj (Laos) Co., Ltd

ປີ 2002-2011: ອາຈານ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ປີ 2011-2017: ຮອງຫົວໜ້າພາກວິຊາບັນຊີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ປີ 2017-2023: ຫົວໜ້າພາກວິຊາບັນຊີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

2023-ປະຈຸບັນ: ຮອງຫົວໜ້າຄະນະວິຊາ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

2019-2020, 2023: ສາດສະດາຈານຮັບເຊີນ, Senshu University, ປະເທດຍີ່ປຸ່ນ



赛蓬·贡玛尼拉副教授、博士

简历：

出生日期：1973 年 12 月 30 日

国籍：老挝

职务：独立董事

教育背景：

1992—1995 年：通信电气专业学士（同等学历），KMITNB，泰国

1997—2001 年：工商管理学士，泰国商会大学，泰国

2004—2006 年：工商管理硕士，广岛大学，日本

2006—2009 年：工商管理博士，广岛大学，日本

2003 年：老挝注册会计师（CPA Lao PDR），财政部，老挝人民民主共和国

2010 年：澳大利亚注册会计师（CPA Australia），澳大利亚

工作经历：

1995—1997 年：电信工程师，老挝电信国有企业

2000—2001 年：项目审计员，Hi-Key Aircond Technology Co., Ltd.

2001 年：市场与运营部经理，Kharoonroj (Laos) Co., Ltd

2002—2011 年：讲师，国立大学经济与工商管理学院

2011—2017 年：会计系副主任，国立大学经济与工商管理学院

2017—2023 年：会计系主任，国立大学经济与工商管理学院

2023 年至今：副院长，国立大学经济与工商管理学院

2019—2020 年、2023 年：客座教授，Senshu University，日本

ໃບມອບສິດ

授权委托书

1. ຂ້າພະເຈົ້າ.....ສັນຊາດ.....

ບັດປະຈຳຕົວເລກທີ.....ຫຼື ໜັງສືຜ່ານແດນເລກທີ.....

ທີ່ຢູ່ປະຈຸບັນເຮືອນເລກທີ.....ບ້ານ.....ເມືອງ.....

ແຂວງ.....

ເບີໂທລະສັບ.....ອີເມວ.....

ເປັນຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ)

ມີຮຸ້ນທີ່ຖືຄອງຈຳນວນ.....ຮຸ້ນ ຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ.

本人姓名：_____国籍：_____

身份证号码：_____ 或护照号码：_____

现住址：门牌号_____ ，村_____ ，县_____，省/市_____，

电话号码：_____ 电子邮箱：_____

作为老-中证券公众公司（老-中证券）的股东

持有该公司股份共_____股，享有同等数量的表决权。

2. ຂໍມອບໝາຍໃຫ້ສະມາຊິກອິດສະລະ (ເລືອກຜູ້ຕາງໜ້າພຽງແຕ່ 1 ທ່ານ) / 兹授权独立董事（仅选择一名作为代理人）

- ☐ ທ່ານ ຣສ ປອ. ປິຍະ ວົງພິດ/比亚·翁匹先生
- ☐ ທ່ານ ຫວາງ ເວີຍ/ 王崴先生
- ☐ ທ່ານ ນະ ຈັນຕະລີວົງ/ 纳·占达里翁先生
- ☐ ບຸກຄົນອື່ນ ກະລຸນາລະບຸລາຍລະອຽດດັ່ງລຸ່ມນີ້/ 或其他人员，请注明并填写以下详细信息:

ຂໍມອບໝາຍໃຫ້ທ່ານ.....ອາຍຸ.....

ສັນຊາດ.....ບັດປະຈຳຕົວເລກທີ.....

ຫຼື ໜັງສືຜ່ານແດນເລກທີ.....

ທີ່ຢູ່ປະຈຸບັນເຮືອນເລກທີ.....ບ້ານ.....ເມືອງ.....

ແຂວງ.....

ເບີໂທລະສັບ.....ອີເມວ.....

兹授权 姓名：_____ 年龄 ：_____

国籍：_____身份证号码：_____
或护照号码：_____
现住址：门牌号_____ ，村_____ ，县_____，省/市_____，
电话号码：_____ 电子邮箱：_____

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026, ທີ່ຈະຈັດຂຶ້ນໃນ ເວລາ 9:00 ໂມງ ຂອງວັນທີ 9 ກໍລະກົດ 2026.

为本人的代理人，代表本人出席将于 2026 年 7 月 9 日北京时间 10:00 召开的老-中证券 2026 年第一次临时股东会，并代为行使表决权。

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງຈາກສອງທາງເລືອກລຸ່ມນີ້):

本人授权代理人按下列指示在会上行使表决权（请在以下两项中任选一项）：

3.1 ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື

☐ 授权代理人就所有议案自行酌情审议并表决；或

3.2 ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):

☐ 授权代理人按本人的下列意愿进行表决（如选择此项，请对以下所有议案逐一表明“同意”或“不同意”）：

ວາລະ 01: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ປຸກລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນຄັ້ງທຳອິດ ຂອງ ບລຈ;

议案 01： 审议变更老-中证券首次公开募股募集资金使用方案；

☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 02: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບຄະນະອຳນວຍການ ບລຈ;

议案 02： 审议变更老-中证券管理层成员；

☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 03: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບສະມາຊິກສະພາບໍລິຫານ ບລຈ.

议案 03： 审议变更老-中证券董事会成员。

☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

代理人作出的任何与本授权委托书规定相悖的表决，均应被视为无效，且不得视作本人的表决意见。

5. ໃນກໍລະນີນີ້ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

若本人未就任何议案明确注明表决意愿，或表述含糊不清，则视为本人同意该议案。

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

代理人在会议中依据本授权委托书所实施的一切行为，均视同本人亲自作出。

ທີ່..... ວັນທີ.....

地点：_____ 日期：_____

ເຊັນຜູ້ຖືຮຸ້ນທີ່ມອບໝາຍ
授权股东（签名）

ເຊັນຜູ້ຕາງໜ້າ
代理人（签名）

ໝາຍເຫດ:

备注：

1) ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້;

股东仅可委托一名代理人出席会议并代为行使表决权，不得将其持有的股份分割授权给多名代理人分别进行表决。

2) ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ບລຈ ມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ;

本授权委托书需前往您所在地区便于办理的法院登记处进行公证，以确保其具备法律效力。对于任何未经法院公证的授权委托书，老-中证券有权拒绝接受。

3) ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

代理人需向登记处工作人员出示本人有效身份证件（身份证、户口本，或外国投资者适用的护照），同时提交股东同类证件的复印件、本授权委托书以及会议邀请函。



ท่าน นะ จันตะลิวง

纳·占达里翁先生

ຊີວະປະຫວັດຫຍໍ້:

个人信息：

ວັນ ເດືອນ ປີເກີດ: 09 ມິຖຸນາ 1957

ສັນຊາດ: ລາວ

ຕຳແໜ່ງ: ສະມາຊິກອິດສະລະ

出生日期：1957 年 06 月 09 日

国籍：老挝

职务：独立董事

ປະຫວັດການສຶກສາ:

教育背景：

ປີ 1980-1985: ຊັ້ນສູງ ສາຂາການບັນຊີ, ສະຖາບັນການທະນາຄານ ທີ່ເມືອງດົງດາ ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ

ປີ 2003-2007: ປະລິນຍາໂທ ສາຂາບໍລິຫານທຸລະກິດທີ່ມະຫາວິທະຍາ ໄລ ແຫ່ງ ຊາດ ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ

1980-1985 年：（越南）银行学院会计学，大专

2003-2007 年：（越南）国家经理大学商业管理学，学士

ປະຫວັດການເຮັດວຽກ:

工作经历：

ປີ 1991-1995: ຜູ້ອຳນວຍການ, ບໍລິຫານທະນາຄານອາລຸນໃໝ່ ສຳນັກງານໃຫຍ່ ທີ່ ແຂວງ ຊຽງຂວາງ

ປີ 1996-1997: ຮອງກົມ, ກົມຄຸ້ມຄອງທະນາຄານທຸລະກິດ, ທຫລ

ປີ 1998-1999: ຮອງກົມ, ກົມກວດກາພາຍໃນ, ທຫລ

ປີ 2000-2002: ຫົວໜ້າກົມ, ກົມບໍລິການທະນາຄານ, ທຫລ

ປີ 2003-2005: ຜູ້ອຳນວຍການ, ບໍລິຫານທະນາຄານພັດທະນາລາວ ສຳນັກງານ ໃຫຍ່ ນະຄອນຫຼວງວຽງຈັນ

ປີ 2006-2010: ຫົວໜ້າກົມ ບັນຊີ-ການເງິນ, ທຫລ

ປີ 2010-2016: ຫົວໜ້າສາຂາທະນາຄານ ແຫ່ງ ສ ປປ ລາວ, ບໍລິຫານ ທຫລ ສາຂາພາກໃຕ້ ທີ່ ຈຳປາສັກ

ປີ 2017-2018: ຜູ້ຊ່ວຍຜູ້ວ່າການທະນາຄານ ແຫ່ງ ສ ປປ ລາວ, ດູແລວຽກບັນຊີ-ການເງິນ, ທຫລ

ປີ 2019-ປະຈຸບັນ: ທີ່ປຶກສາ, ການເງິນ-ທະນາຄານ, ກຸ່ມບໍລິສັດພິງຊັບທະວີ

1991-1995 年：新曙光银行川圹省分行行长

1996-1997 年：老挝央行银行管理部副司长

1998-1999 年：老挝央行银行内部监察部副司长

2000-2002 年：老挝央行银行银行服务部司长

2003-2005 年：老挝开发银行行长

2006-2010 年：老挝央行会计-财务司司长

2010-2016 年：老挝央行南部分行行长

2017-2018 年：老挝央行行长助理，分管会计-财务工作

2019 年至今：蓬沙塔维集团公司金融银行顾问



ท่าน หวาง เอ๋ย

王崴先生

ຊີວະປະຫວັດຫຍໍ້:

个人信息：

ວັນ ເດືອນ ປີເກີດ: 25 ຕຸລາ 1972

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກອິດສະລະ

出生日期：1972 年 10 月 25 日

国籍：中国

职务：独立董事

ປະຫວັດການສຶກສາ:

教育背景：

ປີ 1992-1994: ຊັ້ນສູງ ສາຂາວິຊາຄະນະເອກະສານ, ມະຫາວິທະຍາໄລແຂວງຢຸນນານ

1992-1994 年: 云南大学档案学（行政信息方向），大专

ປະຫວັດການເຮັດວຽກ:

工作经历：

ປີ 1994-2014: ຫົວໜ້າພະແນກ, ວຽກງານຄະນະກຳມະການພັກ, ບໍລິສັດສາກົນຢຸນນານ

ປີ 2014-ປະຈຸບັນ: ຫົວໜ້າພະແນກ, ວຽກງານຂອງຂະແໜງການຕົວແທນ ສປປ ລາວ , ບໍລິສັດຫຼັກຊັບ ປາຊິຟິກຮຸ້ນສ່ວນ ຈຳກັດ

1994-2014 年：云南国际公司部门经理

2014 年至今：太平洋证券股份有限公司老挝代表处部门总经理



ท่าน ธส ปอ. ปียะ อิงพิด

比亚·翁匹先生

ຊີວະປະຫວັດຫຍໍ້:

个人信息：

ວັນ ເດືອນ ປີເກີດ: 23 ຕຸລາ 1979

ສັນຊາດ: ລາວ

ຕຳແໜ່ງ: ສະມາຊິກອິດສະລະ

出生日期：1979 年 10 月 23 日

国籍：老挝

职务：独立董事

ປະຫວັດການສຶກສາ:

教育背景：

ປີ 1998-2002: ປະລິນຍາຕີ ສາຂາວິຊາບໍລິຫານທຸລະກິດ ສາຂາການເງິນ , ມະຫາວິທະຍາໄລຫໍການຄ້າໄທ ບາງກອກ ປະເທດໄທ

ปี 2004-2006: ປະລິນຍາໂທ ສາຂາວິຊາເສດຖະສາດ, ມະຫາວິທະຍາໄລໂກເບ ປະເທດຍີ່ປຸ່ນ

ปี 2011-2014: ປະລິນຍາເອກ ສາຂາວິຊາເສດຖະສາດ, ມະຫາວິທະຍາໄລໂກເບ ປະເທດຍີ່ປຸ່ນ

ปี 2025：ສຳເລັດການຝຶກອົບຮົມຫຼັກສູດຜູ້ບໍລິຫານກອງທຶນ, ຈັດຂຶ້ນໂດຍ ຕະຫຼາດຫຼັກຊັບລາວ

1998-2002 年：泰国经贸大学工商管理金融系学士

2004-2006 年：日本神户大学经济学硕士

2011-2014 年：日本神户大学经济学博士

2025 年：完成老挝证券交易所主办的基金管理人员培训课程

ປະຫວັດການເຮັດວຽກ:

工作经历：

ปี 2009-ปะจุบัน: ຫົວໜ້າວິຊາການເງິນ ແລະ ທະນາຄານ, ສິດສອນ, ວຽກງານບໍລິຫານ ແລະ ວິຊາການພາຍໃນພາກ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ

2009 年至今：国立大学，经济学和工商管理学院金融和银行系主任

ຄຳແນະນຳກ່ຽວກັບການລົງຄະແນນສຽງ

表决指引

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ, ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບ ການລົງຄະນແນນໃນແຕ່ລະວາລະ ບລຈ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.

   与会者于会议登记时，将领取所有待表决议案的选票。针对代理表决情形，若授权股东已在委托书中清晰表明对各议案的表决意向，老 - 中证券将在登记环节直接记录其表决结果，届时代理人无需重复表决。

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີ ຕໍ່ບັນຫາດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

   会议仅邀请对所呈报议案持反对意见的股东进行表决（即同意该议案的股东无需进行任何表决动作）。

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ, ຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ບລຈ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.

   表决时，请在发放的选票上填写相关信息，务必清晰注明您的姓名、所持有的老 - 中证券股份数量，并勾选“不同意”栏。

4. ຫຼັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.

   完成表决后，请举起选票，以便工作人员收取并汇总统计。

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.

   计票结果将于会议现场当场公布，计票遵循一股一票原则。

6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ບລຈ ທັງໝົດໃນທີ່ປະຊຸມ.

若要否决一项议案，投“不同意”票的股份数量须超过出席会议总股份数的半数。

ໝາຍເຫດ:

备注：

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ;
   未登记参会的与会者无表决权。

2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນສຽງຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   对于任何议案，在该议案表决结果宣布之后提交的“不同意”选票，均视为无效票。

ຄຳແນະນຳກ່ຽວກັບເອກກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ

出席会议所需出示文件及证明材料说明

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ), ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິນ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ໃບຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

为便于登记参加老-中证券公众公司（LCS）股东会，出席会议的股东或代理人请携带会议邀请函、老挝证券交易所出具的参会确认函；若为代理人出席，还需携带授权委托书。同时，请根据以下不同情况，一并出示可用于证明身份的文件：

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ:

1.1 ບັດປະຈຳຕົວ

1.2 ສຳມະໂນຄົວ

1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)

1. 个人与会者

请在登记时出示本人以下任一有效证件原件：

1.1 身份证

1.2 户口本

1.3 护照（适用于外国投资者）

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ:

2.1 ໃບອະນຸຍາດລົງທຶນ

2.2 ໃບທະບຽນວິສາຫະກິດ

2.3 ໃບທະບຽນອາກອນສະບັບຫຼ້າສຸດ

2. 法人与会者

请在登记时出示上文第 1 条中规定的与会代表个人身份证明文件，并同时出示以下任一文件的原件或加盖公章的复印件：

2.1 投资许可证

2.2 营业执照

2.3 最新版税务登记证

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

若与会者并非该法人的总经理，还需一并出示由总经理签署的授权委托书。

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ບລຈ ມີສິດປະຕິເສດເອກະສານອ້າງອີງໃດໆທີ່ບໍ່ເປັນໄປຕາມການກຳນົດນີ້.

用于出席会议的身份证明及其他证明材料若为外文，须翻译成老挝语，并由具备资质的翻译公司对译文准确性进行签字认证，且外语文件仅限英文。对于任何不符合本规定的文件，老-中证券有权拒绝接受。

ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ບລຈ

老-中证券股东会会议地点地图

➢ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ໃນວັນທີ 9 ກໍລະກົດ 2026, ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄາຕະຫຼາດຫຼັກຊັບລາວ.

老-中证券 2026 年第一次临时股东会

时间：2026 年 7 月 9 日（星期四）北京时间 10:00

地点：老挝首都万象市赛色塔县彭覃村老挝证券交易所大楼 8 楼大会议室

